ARKANSAS Division of WORKFORCESERVICES

**ແຈ້ງການໃຫ້ພະນັກງານ-ລູກຈ້າງ**

ວິທີຢື່ນຄຳຮຽກຮ້ອງຮັບເງິນປະກັນວ່າງງານ

ພະນັກງານ-ລູກຈ້າງຂອງ ______________________________

ມີການຄຸ້ມປະກັນຢູ່ພາຍໃຕ້ກົດໝາຍວ່າດ້ວຍພະແນກບໍຣິການຄົນງານ.

ກົດໝາຍສະບັບນີ້ຈັດໃຫ້ມີເງິນປະກັນວ່າງງານ ໃຫ້ແກ່ຄົນທີ່ຖືກວ່າງງານ ແລະໃນບາງກໍລະນີໃຫ້ແກ່ຄົນທີ່ເຮັດການບໍ່ເຕັມເວລາ.

ໃນຖານະທີ່ທ່ານເປັນພະນັກງານ-ລູກຈ້າງທີ່ມີການຄຸ້ມປະກັນ, ນາຍຈ້າງຂອງທ່ານໄດ້ຝາກເບັ້ຍປະກັນເຂົ້າກອງທຶນທຣັສຕ໌ວ່າງງານແຫ່ງຣັຖອາຄັນຊໍ, ຫລືຖ້າຍັງບໍ່ທັນໄດ້ຝາກ ເພິ່ນກໍຈະຕ້ອງຊົດໃຊ້ກອງທຶນທີ່ຈ່າຍຜົນປະໂຫຍດເງິນວ່າງງານ. **ນາຍຈ້າງຖືກສັ່ງຫ້າມບໍ່ໃຫ້ຫັກເງິນເບັ້ຍປະກັນວ່າງງານແນວໃດອອກຈາກຄ່າຈ້າງຂອງທ່ານ.** ຈົ່ງແນ່ໃຈວ່ານາຍຈ້າງຮູ້ຈັກເລກປະກັນສັງຄົມ (ເລກບັດໂຊໂຊ) ຂອງທ່ານທີ່ຖືກຕ້ອງ.

A. ຖ້າເມື່ອທ່ານຮູ້ວ່າທ່ານຈະຖືກວ່າງງານໜຶ່ງອາທິດຫລືດົນກວ່ານັ້ນ, **ທ່ານຈົ່ງເຮັດສິ່ງນີ້ດ່ວນ:**

ຍື່ນຄຳຮຽກຮ້ອງຮັບຜົນປະໂຫຍດຕໍ່ພະແນກບໍຣິການຄົນງານ.

ພວກເຮົາຈະພະຍາຍາມຫາວຽກງານໃຫ້ທ່ານ ທັງໃນເວລາກ່ອນທີ່ທ່ານຈະເລີ່ມຮັບເງິນວ່າງງານ ແລະໃນເມື່ອທ່ານກຳລັງໄດ້ຮັບແລ້ວ.

B. ຖ້າທ່ານເປັນພະນັກງານ-ລູກຈ້າງປະຈຳຂອງນາຍຈ້າງ, ແລະເຮັດການບໍ່ເຕັມເວລາຍ້ອນເຫດຜົນນີ້ຢ່າງດຽວ ຄື ບໍ່ມີວຽກພຽງພໍເພື່ອເຮັດເຕັມເວລາ, ທ່ານອາດມີສິດຮັບເງິນວ່າງງານບາງສ່ວນ.

ໃນກໍລະນີເຊັ່ນນີ້, ທ່ານຈົ່ງຍື່ນຄຳຮຽກຮ້ອງຮັບຜົນປະໂຫຍດບາງສ່ວນ **--ດ່ວນ --**ແລະແຈ້ງຂໍ້ມູນທີ່ກ່ຽວຂ້ອງ (ເຮັດບໍ່ເຕັມເວລາຈາກວັນທີໃດເຖິງວັນທີໃດ, ຄ່າຈ້າງ, ຊື່ນາຍຈ້າງ). **ຈົ່ງຍື່ນເລື້ອງໂດຍບໍ່ຊັກຊ້າເດີ້.**

ຫ້ອງການປະຈຳທ້ອງຖິ່ນຂອງພວກເຮົາຍິນດີຕອບຄຳຖາມແລະໃຫ້ລາຍລະອຽດຕື່ມ.

ທ່ານທີ່ເປັນຄົນຮຽກຮ້ອງສິດຮັບເງິນປະກັນວ່າງງານສາມາດຮັບບໍຣິການໄດ້ຕາມຫ້ອງການປະຈຳທ້ອງຖິ່ນທີ່ເປີດໃຫ້ບໍຣິການເຕັມເວລາໃນເມືອງເຫລົ່ານີ້:

| | | |
|---|---|---|
| **Conway** | **Hope** | **Paragould** |
| **El Dorado** | **Hot Springs** | **Pine Bluff** |
| **Fayetteville** | **Jonesboro** | **Russellville** |
| **Forrest City** | **Little Rock** | **Searcy** |
| **Fort Smith** | **Mena** | **West Memphis** |
| **Harrison** | **Monticello** | |

**ຄຳເຕືອນ:** ການໃຫ້ການບໍ່ຈິງເພື່ອຈະໄດ້ຮັບຜົນປະໂຫຍດ, ການປິດບັງຂໍ້ເທັດຈິງສຳຄັນ, ຫລືການບໍ່ລາຍງານເຖິງລາຍໄດ້ເພື່ອຈະໄດ້ເງິນວ່າງງານຫລືເພື່ອຈະໄດ້ເງິນວ່າງງານຫລາຍຂຶ້ນ, ແມ່ນເປັນການລະເມີດຕໍ່ກົດໝາຍອາຍາແລະອາດຖືກດຳເນີນຄະດີອາຍາໄດ້.

**** Servicios de Interpretación/Traducción disponibles por medio de su oficina local. --- Ewōr Jerbal in ukok ikijien jeje im kennaan ilo opij ko ijo kwoj pād ie. --- Các Dịch Vụ Thông Dịch/Phiên Dịch có sẵn qua văn phòng địa phương của quý vị. --- ຫ້ອງການປະຈຳທ້ອງຖິ່ນຂອງທ່ານໃຫ້ບໍຣິການນາຍພາສາແລະການແປເອກະສານ --- Interpretation/Translation services available through your local office.****